Ottawa County Health Department

# ຄວາມຈິງຕໍ່ມວນຊົນ

## ບອດຈາລີຊຶ່ມ

### ບອດຈາລີຊຶ່ມຄືຫຍັງ?

ບອດຈາລີຊຶ່ມຄື ອັມມະພາດກ້າມເນື້ອຊະນິດນຶ່ງທີ່ນ້ອຍນັກນ້ອຍຫນາຈະເກີດຂຶ້ນ ເນື່ອງມາຈາກພິດເບື່ອໃນເສັ້ນເອັນ ທີ່ຜະລິດໂດຍ ແບັກແທເຣັຍໃດນຶ່ງ. ບອດຈາລີຊຶ່ມມີຢູ່ນໍາກັນສາມແບບຄື: ພິດເບື່ອໃນອາຫານ, ບາດແຜອັກເສບ, ເຈັບໃນລໍາໄສ້ (ທາຣົກ).

ການເຈັບປ່ວຍຊະນິດນີ້ ອາດເຖິງແກ່ຄວາມຕາຍ ແລະ ກໍຖືວ່າ ເປັນກໍຣະນີສຸກເສີນ.

### ບອດຈາລີຊຶ່ມມີຫລາຍປານໃດ?

ສະຫະຣັດອາເມຣິກາລາຍງານວ່າ ມີຄົນປ່ວຍກໍຣະນີບອດຈາລີຊຶ່ມປະມານ 110 ຄົນ ແຕ່ລະປີ. ຈາກການປ່ວຍດັ່ງກ່າວ, ປະມານ 25% ເປີເຊັນ ແມ່ນເກີດຈາກການເບື່ອອາຫານ, 72% ເກີດໃນລໍາໄສ້, ແລະ 3% ເກີດໃນບາດແຜ.

### ບອດຈາລີຊຶ່ມແຜ່ລາມແນວໃດ?

ບອດຈາລີຊຶ່ມອາດແຜ່ລາມໃນວິທີດັ່ງຕໍ່ໄປນີ້:

- ພິດເບື່ອໃນອາຫານ
  - ອາຫານທີ່ບູດເນົ່າ
  - ອາຫານທີ່ເຮັດບໍ່ຖືກຕ້ອງ, ລວມທັງອາຫານກະປ໋ອງທີ່ເຮັດເອງ
- ບາດແຜອັກເສບ
  - ແບັກແທເຣັຍເກີດໃນບາດແຜ
  - ສັກຢາແບບຜິດຫລັກການ
- ເຈັບໃນລໍາໄສ້ (ທາຣົກ)
  - ກິນອາຫານທີ່ມີເຊື້ອແຜ່ລາມໄປນໍາໄສ້ແລ້ວກາຍເປັນພິດເບື່ອ

ບອດຈາລີຊຶ່ມກໍສາມາດໃຊ້ເຮັດອາວຸດໄດ້ ຊະນິດຂະຫຍາຍແບັກແທເຣັຍ ໂດຍການສົ່ງມັນໄປຕາມອາກາດ.

ບອດຈາລີຊຶ່ມບໍ່ແມ່ນພະຍາດຊະນິດທີ່ລາມຕິດຕໍ່ກັນ.

### ອາການບາງຢ່າງມີຫຍັງແດ່?

ນີ້ຄືອາການທົ່ວໄປຂອງພະຍາດນີ້:

- ຕາລາຍ
- ຕາມົວ
- ເວົ້າບໍ່ແຈ້ງ
- ກືນນໍ້າລາຍຍາກ
- ປາກແຫ້ງ
- ກ້າມເນື້ອອ່ອນເພັຍ ຫລື ເຫນັງຕີງບໍ່ໄດ້

*ພິດເບື່ອໃນອາຫານ:* ອາການທໍາອິດຈະເກີດຂຶ້ນພາຍໃນ 18 ຫາ 36 ຊົ່ວໂມງ, ແຕ່ອາດເກີດຂຶ້ນໄວກວ່ານັ້ນພາຍໃນ 6 ຊົ່ວ ໂມງ ຫລືເກີດຊ້າສຸດພາຍໃນ 14 ມື້.

*ເຈັບໃນລໍາໄສ້ (ທາຣົກ):* ເດັກທາຣົກອາດເບິ່ງຄືເມື່ອຍ, ບໍ່ຢາກກິນ, ຖ່າຍຍາກ, ໄຫ້ແບບບໍ່ມີກໍາລັງ ແລະອ່ອນເພັຍ.

### ຈະກວດພົບບອດຈາລີຊຶ່ມໄດ້ແນວໃດ?

ຈະກວດພົບບອດຈາລີຊຶ່ມໄດ້ຈາກເລືອດ ຫລືອາຈົມ (ຂີ້) ຂອງຄົນເຈັບ, ແລະໂດຍການກວດອາຫານທີ່ໄດ້ກິນ.

### ຈະຮັກສາບອດຈາລີຊຶ່ມໃນວິທີໃດ?

ໃນຕອນຕົ້ນຂອງການເຈັບປ່ວຍ ທ່ານຫມໍຈະປິ່ນປົວພະຍາດນີ້ດ້ວຍຢາ ແອນທາຍທ໋ອກຊິນ, ຊຶ່ງມັນຈະກໍາຈັດພິດເບື່ອໃນເລືອດ.

ແຕ່ເຖິງຢ່າງໃດກໍດີ, ຄົນປ່ວຍບາງຄົນອາດຕ້ອງໄດ້ໃຊ້ເຄື່ອງຊ່ວຍຫາຍໃຈ ຫລາຍອາທິດ, ພ້ອມດ້ວຍຮັບການຮັກສາ ແລະດູແລຢ່າງໃກ້ຊິດຈາກຫນ່ວຍແພດ.

### ສໍາລັບລາຍລະອຽດເພີ່ມເຕີມກ່ຽວກັບບອດຈາລີຊຶ່ມ ໃຫ້ຕິດຕໍ່ໄປທີ່:

Ottawa County Health Department
www.miOttawa.org

Center for Disease Control and Prevention
www.bt.cdc.gov/agent/botulism/
ເລກໂທຣະສັບ: (888) 246-2675

12251 James St., Suite 400
Holland, MI  49424

ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643

ແວບໄຊ: www.miOttawa.org